ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1248 /ກງ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 09 JUL 2011

## ແຈ້ງການແນະນຳ(ເພີ່ມເຕີມ)

## ກ່ຽວກັບການນຳໃຊ້ເອກະສານຢັ້ງຢືນການມອບເງິນລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກຂອງລັດຖະບານຜ່ານລະບົບທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດຂອງລັດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນ ວາ, ປີ 2006.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ່ 259/ນຍ ລົງວັນທີ 01 ມິຖຸນາ, ປີ 2010 ວ່າດ້ວຍຄັງເງິນແຫ່ງຊາດ.
- ອີງຕາມ ແຈ້ງການແນະນຳ ຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 3013/ກງ, ລົງວັນ ທີ 24 ພະຈິກ 2010 ກ່ຽວກັບການມອບເງິນລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກຂອງ ລັດຖະບານຜ່ານລະບົບທະນາຄານ ໃນຂອບເຂດທົ່ວປະເທດ.

ຫ້ອງການກະຊວງການເງິນ ອອກແຈ້ງການແນະນຳ(ເພີ່ມເຕີມ) ດັ່ງນີ້:

**1. ຈຸດປະສົງ ແລະ ຂອບເຂດການນຳໃຊ້:**

1.1. ຈຸດປະສົງ

- ເພື່ອເປັນເອກະສານຢັ້ງຢືນທາງດ້ານນິຕິກຳ ກ່ຽວກັບການມອບເງິນລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກຂອງລັດຖະບານຜ່ານລະບົບທະນາຄານ.
- ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ບັນດາແບບຟອມການມອບລາຍຮັບງົບປະມານຜ່ານລະ ບົບທະນາຄານ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ແນ່ໃສ່ການສະກັດກັ້ນທຸກຊ່ອງ ຫວ່າງທີ່ອາດຈະເກີດຄວາມເສຍຫາຍໃຫ້ແກ່ລັດ.
- ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຂະແໜງການເກັບລາຍຮັບ, ຜູ້ ປະຕິບັດພັນທະງົບປະມານ, ຄັງເງິນແຫ່ງຊາດ ແລະ ທະນາຄານ ທຸລະກິດຂອງລັດ.

1.2. **ຂອບເຂດການນຳໃຊ້:**

ບັນດາກະຊວງ, ທະບວງ, ອົງການຈັດຕັ້ງມະຫາຊົນ, ບັນດາແຂວງ, ນະຄອນຫລວງວຽງຈັນ, ຂະແໜງການເກັບລາຍຮັບ, ຄັງເງິນແຫ່ງຊາດ, ທະນາຄານແຫ່ງ ສປປ ລາວ, ທະນາຄານການຄ້າຕ່າງປະເທດ, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ ແລະ ບັນດາຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງກັບຂະບວນການມອບລາຍຮັບ.

1.3. **ຈຸດບໍລິການຂອງທະນາຄານ**

ທະນາຄານແຫ່ງ ສປປ ລາວ, ກົມບໍລິການ ແລະ ສາຂາ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນສຳນັກງານໃຫຍ່ ແລະ ສາຂາ, ທະນາຄານພັດທະນາລາວສຳນັກງານໃຫຍ່ ແລະ ສາຂາ, ທະນາຄານສົ່ງເສີມກະສິກຳສຳນັກງານໃຫຍ່ ແລະ ສາຂາ ລວມທັງໜ່ວຍບໍລິການ, ຈຸດແລກປ່ຽນຕ່າງໆຂອງແຕ່ລະທະນາຄານທີ່ໄດ້ລະບຸໄວ້ຂ້າງເທິງ.

2. **ວິທີການນຳໃຊ້ແບບຟອມຕ່າງໆໃນການມອບເງິນລາຍຮັບງົບປະມານເຂົ້າບັນຊີເງິນຝາກຂອງລັດຖະບານຢູ່ທະນາຄານ.**

2.1 ແບບຟອມການມອບເງິນຢູ່ທະນາຄານທີ່ໃຊ້ແທນໃບຮັບເງິນຂອງຄັງເງິນແຫ່ງຊາດປະກອບມີດັ່ງນີ້:

- ໃບແຈ້ງ (Avis)
- ໃບມອບເງິນສົດ
- ໃບມອບສົດໂອນເງິນ(ໃບແຈ້ງໜີ້ ແລະ ແຈ້ງມີ)
- ແບບຟອມໂອນເງິນພາຍໃນ
- ໃບມອບແຊັກ

ສຳລັບແບບຟອມອື່ນໆຂອງທະນາຄານທີ່ບໍ່ໄດ້ກຳນົດຢູ່ຂ້າງເທິງນີ້ ໃຫ້ຜູ້ປະຕິບັດພັນທະບ່ອນທີ່ທີ່ວໜ່ວຍທຸລະກິດຕົນຂຶ້ນທະບຽນອາກອນ ນຳໃບແຈ້ງດັ່ງກ່າວໄປຫາຄັງເງິນຂອງຄັງເງິນແຫ່ງຊາດ ເພື່ອອອກໃບຮັບເງິນຢັ້ງຢືນເຖິງການມອບພັນທະ.

2.2 ການອອກໃບຢັ້ງຢືນໃຫ້ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດຜ່ານລະບົບທະນາຄານ ຢູ່ທະນາຄານແຫ່ງ ສປປ ລາວ ກົມບໍລິການ, ສາຂາທະນາຄານແຫ່ງ ສປປລາວ, ທະນາຄານການຄ້າຕ່າງປະເທດລາວສຳນັກງານໃຫຍ່ ແລະ ສາຂາ, ທະນາຄານພັດທະນາລາວສຳນັກງານໃຫຍ່ ແລະ ສາຂາ, ທະນາຄານສົ່ງເສີມກະສິກຳສຳນັກງານໃຫຍ່ ແລະ ສາຂາ; ຈະອອກຕາມແບບຟອມທີ່ໄດ້ກຳນົດໄວ້ ຂໍ້ 2.1 ຂ້າງເທິງໄປຕາມສະພາບຈຸດພິເສດສະເພາະຂອງແຕ່ລະທະນາຄານກຳນົດ.

2.3 ຜູ້ປະຕິບັດພັນທະ ສາມາດຖືເອົາເອກະສານຢັ້ງຢືນຂອງທະນາຄານ ທີ່ໄດ້ກຳນົດຢູ່ຂໍ້ 2.1 ຂ້າງເທິງ ເປັນເອກະສານຢັ້ງຢືນທາງດ້ານນິຕິກຳ/ກົດໝາຍ ກ່ຽວກັບການມອບພັນທະຢ່າງຖືກຕ້ອງຕາມລະບຽບກົດໝາຍ.

2.4 ການມອບລາຍຮັບງົບປະມານ ສຳລັບການນຳເຂົ້າສິນຄ້າບາງປະເພດ ຢູ່ຕາມດ່ານພາສີສາກົນ ທີ່ຕິດພັນກັບລາຍຮັບພາສີ-ອາກອນ ໃຫ້ປະຕິບັດດັ່ງນີ້:

- ພາຍຫລັງເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ບໍລິການແຈ້ງເສຍພາສີທີ່ໄດ້ຮັບອະນຸຍາດປະກອບເອກະສານໃບແຈ້ງເສຍພາສີ ເປັນລາຍລະອຽດ ແລະ ລົງທະບຽນຖືກຕ້ອງ ຈາກເຈົ້າໜ້າທີ່ພາສີແລ້ວຕ້ອງນຳໃບແຈ້ງເສຍເປັນລາຍລະອຽດ ໄປມອບເງິນຕົວຈິງ ເຂົ້າບັນຊີເງິນຝາກຂອງລັດຖະບານຢູ່

ຕາມຈຸດບໍລິການຂອງທະນາຄານທີ່ໄດ້ກຳນົດໃນຂໍ້ 1.3 ຂ້າງເທິງ. ການມອບລາຍຮັບຜ່ານທະນາຄານ ຕ້ອງມອບກ່ອນການປິດບັນຊີ ຂອງທະນາຄານທີ່ໄດ້ກຳນົດໄວ້ (ກ່ອນເວລາ 15:30 ໂມງ).

- ກໍລະນີການມອບພັນທະດ້ວຍແຊັກຂອງທະນາຄານອື່ນ ທີ່ໄດ້ວີຊາແລ້ວຕ້ອງມອບກ່ອນເວລາ 13:00 ໂມງ.
- ຈຸດບໍລິການຂອງທະນາຄານຮັບເງິນ, ອອກໃບຢັ້ງຢືນ, ຈ້ຳກາຂອງທະນາຄານໃສ່ໃບແຈ້ງເສຍພາສີ, ໃນກໍລະນີເອກະສານການແຈ້ງເສຍພາສີ ມີຫຼາຍສະບັບ, ໃຫ້ທະນາຄານອອກໃບຢັ້ງຢືນມອບເງິນລວມເປັນໃບດຽວ ພ້ອມທັງຈ້ຳກາຂອງທະນາຄານໃສ່ເອກະສານໃບແຈ້ງເສຍພາສີ (ແຕ່ລະໃບ ບໍ)ໃຫ້ຄືນຖ້ວນ.
- ເຈົ້າຂອງສິນຄ້າ, ເຄື່ອງຂອງ ໃຫ້ຖືເອົາແບບຟອມການມອບເງິນຢູ່ທະນາຄານ ແລະ ໃບແຈ້ງເສຍພາສີ ທີ່ມີກາຈ້ຳຂອງທະນາຄານເປັນເອກະສານຢັ້ງຢືນທາງດ້ານນິຕິກຳ ເພື່ອນຳໄປຈົດທະບຽນ ຫລືແຈ້ງຕໍ່ການກວດກາສິນຄ້າ, ເຄື່ອງຂອງຈາກເຈົ້າໜ້າທີ່ຂອງລັດ ໂດຍບໍ່ຕ້ອງກັບຄືນໄປຫາຄັງເງິນແຫ່ງຊາດອອກໃບຮັບເງິນອີກ.

ໃນການປະຕິບັດຕົວຈິງຫາກພົບບັນຫາຫຍຸ້ງຍາກ ບໍ່ສາມາດແກ້ໄຂໄດ້, ໃຫ້ນຳສະເໜີຄັງເງິນແຫ່ງຊາດ ຫຼື ຂະແໜງການເກັບລາຍຮັບເພື່ອຄົ້ນຄວ້າພິຈາລະນາ ແລະ ຫາວິທີການແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພາກສ່ວນກ່ຽວຂ້ອງເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເປັນທາງການນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ສີລາ ວຽງແກ້ວ